# ໑໒ ກະສັດທີໜຶ່ງ    ກະສັດທີສອງ

| | | |
|---|---|---|
| ໃຈຄວາມສຳຄັນ | ການແຕກແຍກ | ການຖືກເນຣະເທດ |
| ຂໍ້ຄວາມສຳຄັນ | ບົດ ໑໑:໑໐ | ບົດ ໑໗:໒໓–໒໔ |
| ຈຳນວນບົດ | ໒໒ ບົດ | ໒໕ ບົດ |
| ເຣື່ອງເກີດຂຶ້ນ | ໑໐໑໕ ປີກ່ອນ ຄ.ສ. | ໘໕໓ ປີກ່ອນ ຄ.ສ. |
| ເສັດສິ້ນເມື່ອປີ | ໘໕໓ ກ່ອນ ຄ.ສ. | ໕໘໖ ກ່ອນ ຄ.ສ. |

## ໑. ຄຳນຳ

ຜູ້ຂຽນໜັງສືນີ້ ຄົນສ່ວນຫລາຍຄິດວ່າແມ່ນເຢເຣມີ ຄັ້ງແຣກໜັງສືນີ້ເປັນເຫລັ້ມດຽວກັນກັບໜັງສືຊາເໝືອນ ຜູ້ຂຽນໄດ້ເລົ່າເຣື່ອງກ່ຽວກັບສາສນາ ເພາະຢາກໃຫ້ຄົນທັງຫລາຍຮູ້ຈັກຜົນຂອງຄວາມດີແລະຊົ່ວ ແລະເລົ່າເຣື່ອງຜົນງານຂອງພວກກະສັດອິສຣາເອັນທັງໝົດ ຄືເລົ່າຕັ້ງແຕ່ຄາວສິ້ນສຸດສໄມຂອງກະສັດດາວິດ ຈົນເຖິງຄາວພວກອິສຣາເອັນຖືກເນຣະເທດ ເຣື່ອງທີ່ເລົ່ານີ້ໄດ້ເກີດຂຶ້ນກິນເວລາປະມານ ໔໐໐ ປີ.

## ໒. ວ່າດ້ວຍກະສັດຂອງພວກອິສຣາເອັນ

ເມື່ອພວກອິສຣາເອັນຍັງເປັນຝ່າຍດຽວກັນ ພວກເຂົາມີກະສັດປົກຄອງເຖິງສາມອົງຄື

໑. ກະສັດຊາອຶເລໄດ້ປົກຄອງ ໔໐ ປີ
໒. ກະສັດດາວິດໄດ້ປົກຄອງ ໔໐ ປີ
໓. ກະສັດຊາໂລໂມນໄດ້ປົກຄອງ ໔໐ ປີ

## ບັນຊີສະແດງເຫດການທີ່ເກີດຂຶ້ນກັບອານາຈັກທັງສອງ

| ເຫດການທີ່ກ່ຽວກັບ | ຂອງອານາຈັກຢູດາ | ຂອງອານາຈັກອິສຣາເອັນ |
|---|---|---|
| ຊື່ກະສັດອົງແຣກ | ໂຣໂບອາມ (ພຣະຣາຊບຸດກະສັດຊາໂລໂມນ) | ເຢໂຣໂບອາມ |
| ເມືອງເອກ | ເຢຣູຊາເລັມ | ຊາມາລີ |
| ຈຳນວນກະສັດ | ໒໐ ອົງ | ໑໙ ອົງ |
| ຈຳນວນກະສັດທີ່ | ໔ ອົງ | ບໍ່ມີ |
| ເວລາທີ່ເປັນເອກະຣາດ | ໓໘໔ ປີ | ໒໔໘ ປີ |

ກະສັດເນບູກາດເນດຊາເຣຈັບພວກຢູດາໄປເມືອງບາບີໂລນໃນປີ ໕໘໖ ຢູ່ທີ່ນັ້ນ ໗໐ ປີເລີຍກັບມາ ໃນປີ ໗໒໒ ແມ່ນພວກອິສຣາເອັນຖືກພວກອາຊີຣີຈັບໄປປະເທດອາຊີຣີ ແລະໄດ້ຢູ່ທີ່ນັ້ນຕລອດໄປ ບໍ່ໄດ້ກັບຄືນ

## ປ. ວ່າດ້ວຍເນື້ອເຣື່ອງ

໑. ກະສັດຊາໂລໂມນ ພຣະຣາຊບຸດຂອງກະສັດດາວິດໄດ້ສເວີຍຣາຊສົມບັດເປັນເວລາ ໔໐ ປີ ໃນເວລານັ້ນພວກອິສຣາເອັນໄດ້ມີຄວາມສຸກທະວີພ້າ ເພາະເປັນຄາວຢູ່ໃນຄວາມສງົບສຸກ ບໍ່ມີເສິກສົງຄາມດ້ວຍວ່າກະສັດຊາໂລໂມນເອງຊົງມີຄວາມສລຽວສລາດຢ່າງຍິ່ງ (໓:໑໐–໑໔, ໔:໒໙–໓໔) ແຕ່ບັ້ນປາຍຂອງກະສັດອົງນີ້ໄດ້ມີເຣື່ອງບໍ່ດີບໍ່ງາມເກີດຂຶ້ນ ເພາະພຣະອົງຊົງມົວເມົາໃນຜູ້ຍິງ ມີມະເຫສີ

ຫລາຍອົງ ຈຶ່ງເປັນເຫດໃຫ້ປະຖິ້ມພຣະເຈົ້າແລ້ວກັບຄືນມານົບຮູບ (ບົດ ໑໑)

໖. ເຣື່ອງອານາຈັກສອງຝ່າຍ ເມື່ອກະສັດຊາໂລໂມນສິ້ນພຣະຊົນລົງ ພວກອິສຣາເອັນກໍໄດ້ແຕກແຍກກັນເປັນສອງຝ່າຍ ຄືເປັນຝ່າຍຢູດາຝ່າຍອິສຣາເອັນຫລືເອີ້ນອີກຢ່າງນຶ່ງກໍວ່າອານາຈັກຝ່າຍໃຕ້ (ຢູດາ) ແລະອານາຈັກຝ່າຍເໜືອ (ເມືອງຊາມາຣີ)

## ໔. ວ່າດ້ວຍກະສັດທີ່ບໍ່ດີ

ກ. ເພາະໄດ້ເຮັດການຮ້າຍຕໍ່ພຣະເຢໂຮວາ

ຂ. ເພາະໄດ້ປະພຶດຕາມຣີດຄອງເຢໂຣໂບອາມ

ຄ. ເພາະບໍ່ໄດ້ທຳລາຍບ່ອນສູງທັງຫລາຍ

ງ. ເພາະໄດ້ນົບຮູບແລະປະຖິ້ມພຣະເຈົ້າ

## ໕. ວ່າດ້ວຍບົດສຳຄັນ

໑. ກະສັດ ບົດ ໖ ກະສັດຊາໂລໂມນຊົງສ້າງພຣະວິຫານ

,, ໘ ການສລອງພຣະວິຫານ

,, ໑໐ ພຣະຣາຊີນີທີ່ມາຈາກເມືອງເຊບາ

,, ໑໑ ກະສັດຊາໂລໂມນກັບຜູ້ຍິງຊາດອື່ນ

,, ໑໗–໑໙ ທ່ານເອລີທີເປັນຜູ້ທຳນວາຍມີຄວາມເຊື່ອຫລາຍດີ

໑. ເພີ່ນໄດ້ອ້ອນວອນບໍ່ໃຫ້ຝົນຕົກ ແລ້ວຝົນບໍ່ໄດ້ຕົກເຖິງສາມປີຫົກເດືອນ

໒. ເພິ່ນ ສາມາດ ເຮັດໃຫ້ ຄົນ ຜູ້ນຶ່ງ ຄືນມາ ຈາກຕາຍໄດ້ (ຢາໂກໂບ ໕:໑໗–໑໘)

໓. ເພິ່ນໄດ້ຕໍ່ສູ້ກະສັດອາກາບ

໔. ເພິ່ນ ສາມາດ ເຮັດ ໃຫ້ ໄຟຕົກ ມາ ຈາກ ສວັນເພື່ອຈູດເຜົາເຄື່ອງບູຊາ

ກະສັດທີ ໒ ບົດ ໒ ທ່ານເອລີຢາຜູ້ໄດ້ຂຶ້ນໄປຍັງສວັນເມື່ອຍັງມີ ຊີວິດຢູ່

,, ໔–໘ ທ່ານເອລີເຊເປັນຜູ້ ທຳນວາຍໄດ້ ກະທຳ ການອັນອັສຈັນຫລາຍຢ່າງ ຊຶ່ງປຽບ ກັບກິຈການຂອງພຣະເຢຊູເອງ

໖. ການແບ່ງເປັນພາກ

ກະສັດທີ ໑

ພາກທີ ໑ ການປົກຄອງຂອງກະສັດຊາໂລໂມນ ບົດ ໑–໑໑

ພາກທີ ໒ ການແຕກແຍກແລະປວັດຂອງ ອານາຈັກສອງຝ່າຍ ບົດ ໑໒–໒໔

ເຣື່ອງຂອງທ່ານເອລີ ບົດ ໑໗–໒໑

ກະສັດທີ ໒

ພາກທີ ໓ ປວັດຂອງອານາຈັກທັງ ໒ ຈົນເຖິງຄາວ ທີ່ອານາຈັກອິສຣາເອັນຖືກເສັຍໄປ ບົດ ໑–໑໗

ເຣື່ອງຂອງທ່ານເອລີເຊ ບົດ ໒-໑໓, ໑໗

ພາກທີ ໔ ສຸດເຣື່ອງພຣະຣາຊອານາຈັກຢູດາ ບົດ ໑໘–໒໕